**ມິຊຊາອາທິດທີ 28 ກຳນົດທຳມະດາ**
**ວັນທີ 10 ຕຸລາ 2021**



**ພຣະວໍລະສານໂດຍນັກບຸນມັກໂກ 10, 17-30**

ໃນເວລານັ້ນ, ເມື່ອເວລາພຣະເຢຊູເຈົ້າກຳລັງເດີນທາງໄປ ກໍມີຄົນຜູ້ໜຶ່ງແລ່ນມາຫາຂາບລົງຕໍ່ພຣະພັກພຣະອົງທູນວ່າ: “ພຣະອາຈານຜູ້ດີ, ຂ້ານ້ອຍຈະຕ້ອງເຮັດແນວໃດເພື່ອຈະໄດ້ຮັບສ່ວນໃນຊີວິດນິຣັນດອນ?” ພຣະເຢຊູເຈົ້າຕອບວ່າ: “ເປັນຫຍັງເຈົ້າຈຶ່ງເອີ້ນເຮົາເປັນຜູ້ດີ. ບໍ່ມີໃຜດີ ນອກຈາກພຣະເຈົ້າແຕ່ຜູ້ດຽວ. ເຈົ້າກໍຮູ້ຈັກພຣະບັນຍັດດີຄື: ຢ່າຂ້າຄົນ, ຢ່າລ່ວງປະເວນີ, ຢ່າລັກຂະໂມຍ, ຢ່າໃສ່ຄວາມເຂົາ, ຢ່າທຳຮ້າຍຜູ້ໃດ, ຈົ່ງນັບຖືບິດາມານດາຂອງເຈົ້າ”. ຄົນຜູ້ນັ້ນຕອບວ່າ: “ພຣະອາຈານ, ທຸກສິ່ງເຫລົ່ານີ້ຂ້ານ້ອຍໄດ້ຖືມາແຕ່ເວລາຍັງໜຸ່ມນ້ອຍແລ້ວ”. ພຣະເຢຊູເຈົ້າຈຶ່ງຈ້ອງຕາແນມເບິ່ງຄົນນັ້ນ ແລະມີຄວາມຮັກແພງເຂົາ. ພຣະອົງກ່າວກັບເຂົາວ່າ: “ເຈົ້າຍັງຂາດແນວໜຶ່ງ ຄືໃຫ້ເມືອຂາຍຊັບສົມບັດຂອງເຈົ້າ ແລະເອົາໄປທານຄົນທຸກຈົນ, ແລ້ວເຈົ້າຈະມີຊັບຢູ່ສະຫວັນ. ຕໍ່ໄປໃຫ້ເຈົ້າມານຳເຮົາ”. ພໍໄດ້ຍິນຄວາມນີ້, ຄົນຜູ້ນັ້ນກໍມີຄວາມເສຍໃຈ ແລະຫລົບເມືອຢ່າງໂສກເສົ້າ, ຍ້ອນວ່າ ເຂົາເປັນຄົນຮັ່ງມີຫລາຍ.

ແລ້ວພຣະເຢຊູເຈົ້າ ຊົງເຫລືອດສາຍຕາໄປອ້ອນໆ ແລະກ່າວກັບພວກສາວົກວ່າ: “ພວກທີ່ມີຊັບສົມບັດຫລາຍຈະເຂົ້າໃນອານາຈັກຂອງພຣະເຈົ້າໄດ້ຍາກ”. ພວກສາວົກງຶດງໍ້ໃນຄວາມເວົ້ານີ້; ພຣະເຢຊູເຈົ້າຊົງກ່າວຕໍ່ໄປວ່າ: “ລູກນ້ອຍທີ່ຮັກເອີຍ, ເຂົ້າໃນອານາຈັກພຣະເຈົ້າເປັນການລຳບາກແທ້! ເອົາອູດເຂົ້າຮູເຂັມຍັງງ່າຍກວ່າເອົາຄົນຮັ່ງມີເຂົ້າໃນອານາຈັກຂອງພຣະເຈົ້າ”. ພວກລູກສິດແຮງມີຄວາມປະຫລາດໃຈກ່ວາອີກແລະເວົ້າກັນວ່າ: “ດັ່ງນີ້ຜູ້ໃດຈະເອົາຕົວຣອດໄດ້?” ພຣະເຢຊູເຈົ້າແນມເບິ່ງພວກເຂົາກ່າວວ່າ: “ສຳລັບຄົນນັ້ນເຫັນວ່າເປັນໄປບໍ່ໄດ້, ແຕ່ສຳລັບພຣະເຈົ້າບໍ່ເປັນດັ່ງນັ້ນ, ຍ້ອນວ່າພຣະອົງຊົງກະທຳໄດ້ທຸກຢ່າງ.”

ເປໂຕຈຶ່ງທູນພຣະອົງວ່າ: “ເຫັນບໍ ພວກຂ້ານ້ອຍໄດ້ປະຖິ້ມທຸກຢ່າງເພື່ອມານຳພຣະອົງ.” ພຣະເຢຊູເຈົ້າກ່າວວ່າ: “ເຮົາບອກພວກເຈົ້າເປັນຄວາມຈິງວ່າ: ບໍ່ມີຜູ້ໃດທີ່ໄດ້ປະຖິ້ມເຮືອນຊານ, ອ້າຍນ້ອງ, ເອື້ອຍນ້ອງ, ພໍ່ແມ່, ລູກເຕົ້າ, ໄຮ່ນາຕາກ້າ, ຍ້ອນເຮົາ ແລະພຣະວໍຣະສານ, ຈະບໍ່ໄດ້ຮັບເຮືອນຊານ, ອ້າຍນ້ອງ, ເອື້ອຍນ້ອງ, ພໍ່ແມ່, ລູກເຕົ້າ, ໄຮ່ນາຕາກ້າ, ພ້ອມທັງການບຽດບຽນຂົ່ມເຫັງຕັ້ງແຕ່ໃນຊີວິດນີ້; ເປັນຮ້ອຍເທົ່າ, ແລະຈະໄດ້ຮັບຊີວິດນິຣັນດອນໃນໂລກໜ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົນເສັ້ນທາງຊຶ່ງພຣະເຢຊູເຈົ້າແລະພວກລູກສິດກຳລັງມຸ່ງສູ່ນະຄອນເຢລູຊາແລມ, ກໍມີຊາຍໜຸ່ມຜູ້ໜຶ່ງເຂົ້າມາຖາມພຣະອົງວ່າ: ຂ້ານ້ອຍຕ້ອງເຮັດແນວໃດຈຶ່ງຈະມີຊີວິດນິລັນດອນ? ພຣະເຢຊູເຈົ້າບໍ່ໄດ້ຕອບຊາຍໜຸ່ມຜູ້ນີ້ວ່າຖ້າເຈົ້າຢາກໄດ້ຊີວິດນິລັນດອນຕ້ອງກະທຳສິ່ງນີ້ຫລືສິ່ງນັ້ນ. ແຕ່ພຣະອົງບອກກັບຊາຍໜຸ່ມຜູ້ນີ້ວ່າຈົ່ງກັບເມືອແລະຂາຍທຸກສິ່ງທີ່ເຈົ້າມີ, ທານໃຫ້ຄົນຈົນແລະຕິດຕາມພຣະອົງໄປ. ໝາຍວ່າຊີວິດນິລັນດອນບໍ່ແມ່ນສິ່ງອື່ນໄກ, ແຕ່ແມ່ນການໄດ້ຢູ່ກັບພຣະອົງແລະເປັນສິດຂອງພຣະອົງນັ້ນເອງ. ຍ້ອນພຣະອົງເປັນຫົນທາງ, ຄວາມຈິງແລະຊີວິດ. ແຕ່ຊາຍໜຸ່ມຜູ້ນີ້ບໍ່ສາມາດຕອບຮັບຕໍ່ສຽງຮຽກເອີ້ນຂອງພຣະເຢຊູເຈົ້າໄດ້. ຍ້ອນເຂົາມີຊັບສົມບັດຫລາຍ. ຊັບສົມບັດ, ຄວາມຮັ່ງມີທຳໃຫ້ເຂົາບໍ່ມີບ່ອນສຳລັບພຣະເຢຊູເຈົ້າ, ບໍ່ມີບ່ອນສຳລັບຊີວິດນິລັນດອນ. ຊາຍໜຸ່ມຜູ້ນີ້ໄດ້ໃຫ້ຄວາມສຳຄັນກັບຊັບສົມບັດຂອງຕົນຫລາຍກວ່າພຣະເຈົ້າແລະອານາຈັກຂອງພຣະອົງ. ສິ່ງທີ່ເຂົາເລືອກນັ້ນທຳໃຫ້ເຂົາຕ້ອງໂສກເສົ້າແລະເສຍໃຈ.

ຄວາມປາດຖະໜາທີ່ຈະມີຊີວິດນິລັນດອນຂອງຊາຍໜຸ່ມຜູ້ນີ້ໃນພຣະວໍລະສານ ກໍອາດເປັນຄວາມປາດຖະໜາຂອງພວກເຮົາແຕ່ລະຄົນເຊັ່ນດຽວກັນ. ແລະການທີ່ຊາຍໜຸ່ມຜູ້ນີ້ບໍ່ສາມາດຕອບຮັບຕໍ່ສຽງຮຽກເອີ້ນຂອງພຣະເຢຊູເຈົ້າໃນການສະລະທຸກຢ່າງແລະຕິດຕາມພຣະອົງໄປນັ້ນ ກໍອາດເປັນທັດສະນະທ່າທີຂອງພວກເຮົາເຊັ່ນດຽວກັນ. ຍ້ອນພວກເຮົາມີຄວາມຜູກພັນກັບຊັບສົມບັດໃນໂລກນີ້ຫລາຍກວ່າອານາຈັກສະຫວັນ. ຍ້ອນຈິດໃຈພວກເຮົາເຕັມແຕ່ຄວາມຮັ່ງມີທີ່ສູນເສຍເປັນໃນໂລກນີ້ ຈົນບໍ່ມີບ່ອນສຳລັບພຣະເຢຊູເຈົ້າຜູ້ເປັນບໍ່ເກີດແຫ່ງຊີວິດຂອງພວກເຮົາ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງກ່າວວ່າ ຄົນຮັ່ງມີເຂົ້າໃນອານາຈັກສະຫວັນນັ້ນຍາກກວ່າອູດຕົວໜຶ່ງລອດຄູເຂັມອີກຊ້ຳ. ເຖິງປານນັ້ນກໍດີ, ບໍ່ມີຫຍັງທີ່ເປັນໄປບໍ່ໄດ້ສຳລັບພຣະເຈົ້າ. ໝາຍວ່າພຣະເຈົ້າໃຫ້ໂອກາດແລະລໍຖ້າພວກເຮົາສະເໝີ ເມື່ອພວກເຮົາກັບມາຫາພຣະອົງ.

**ພາວະນາ**

ໂອພຣະເຢຊູເຈົ້າ ອົງແຫ່ງຄວາມສະຫລາດ, ໂຜດຊ່ວຍລູກໃຫ້ຮູ້ຈັກສະລະທຸກສິ່ງຢ່າງທີ່ເປັນຂອງໂລກນີ້ເພື່ອແລກເອົາຂຸມຊັບອັນມີຄ່າທີ່ສຸດຄືຊີວິດນິລັນດອນນັ້ນເອງ. ຄືການໄດ້ຢູ່ກັບພຣະອົງແລະຮ່ວມສຸກກັບພຣະອົງໃນອານາຈັກສະຫວັນນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ